ກະຊວງແຜນການ ແລະ ການລົງທຶນ
ສູນສະຖິຕິແຫ່ງຊາດ

# ບົດລາຍງານ

# ພົນລະເມືອງພິການ ໃນ ສປປ ລາວ

## ຈາກຜົນການສຳຫຼວດພົນລະເມືອງ

## ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ 4 ປີ 2015



ສະໜັບສະໜູນດ້ານວິຊາການ
humanity & inclusion

ສະໜັບສະໜູນດ້ານງົບປະມານ
NORWEGIAN MINISTRY OF FOREIGN AFFAIRS

ສະໜັບສະໜູນດ້ານງົບປະມານ
ການຈັດພິມ ແລະ ເຜີຍແຜ່
UNFPA

ນະຄອນຫຼວງວຽງຈັນ, ກັນຍາ 2020

# ສາລະບານ


ຄຳນຳ ....................................................................................................3

ຄຳສັບຫຍໍ້ ....................................................................................................4

ສາລະບານຮູບສະແດງ ....................................................................................................5

ສາລະບານຕາຕະລາງ....................................................................................................6

ສະຫຼຸບຫຍໍ້....................................................................................................7

I. ພາກສະເໜີ ....................................................................................................10

1.1 ເຫດຜົນຂອງ ການຂຽນບົດລາຍງານ ກ່ຽວກັບ ພົນລະເມືອງພິການໃນ ສປປ ລາວ ....................................10

1.2 ຈຸດປະສົງຂອງບົດລາຍງານ ພົນລະເມືອງພິການໃນ ສປປ ລາວ....................................11

1.3 ປະຫວັດຄວາມເປັນມາ ກ່ຽວກັບ ວຽກງານຄວາມພິການ ໃນ ສປປ ລາວ ....................................11

1.3.1 ແຜນງານດ້ານນິຕິກຳ ແລະ ນະໂຍບາຍ ....................................11

1.3.2 ຂອບເຂດຂອງອົງການຈັດຕັ້ງເພື່ອພົນລະເມືອງພິການ ....................................12

1.4 ກອບແນວຄວາມຄິດ ແລະ ນິຍາມ ກ່ຽວກັບ ການເກັບກຳຂໍ້ມູນພົນລະເມືອງພິການ ....................................13

1.4.1 ເອກະສານແນະນຳທີ່ກ່ຽວຂ້ອງສຳລັບຄວາມຕ້ອງການຂໍ້ມູນພົນລະເມືອງພິການ....................................13

1.4.2 ຮູບແບບຂອງການເປັນພິການ: ການຈັດປະເພດຂອງສາກົນ ສຳລັບໜ້າທີ່ການ, ຄວາມພິການ ແລະ ສຸຂະພາບ (ICF)....14

II. ວິທີການ....................................................................................................16

2.1 ການວິໄຈຂໍ້ມູນພົນລະເມືອງພິການ ....................................16

2.2 ການວັດແທກຄວາມພິການ....................................16

2.3 ຂໍ້ຈຳກັດ....................................18

III. ຜົນໄດ້ຮັບ....................................................................................................20

3.1 ອັດຕາສ່ວນພົນລະເມືອງພິການ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ)....................................20

3.1.1 ພົນລະເມືອງພິການແບ່ງຕາມລະດັບຄວາມຫຍຸ້ງຍາກ ....................................20

3.1.2 ພົນລະເມືອງພິການແບ່ງຕາມປະເພດໜ້າທີ່ການ....................................21

3.1.3 ພົນລະເມືອງພິການແບ່ງຕາມເພດ....................................21

3.1.4 ພົນລະເມືອງພິການແບ່ງຕາມໝວດອາຍຸ ....................................22

3.1.5 ພົນລະເມືອງພິການແບ່ງຕາມເຂດທີ່ຢູ່ອາໄສ....................................24

3.1.6 ພົນລະເມືອງພິການແບ່ງຕາມກຸ່ມຊົນເຜົ່າ....................................26

3.2 ສາເຫດຕົ້ນຕໍຂອງການເປັນພິການ ....................................26

3.2.1 ສາເຫດຕົ້ນຕໍຂອງການເປັນພິການແບ່ງຕາມເພດ ....................................26

3.2.2 ສາເຫດຕົ້ນຕໍແບ່ງຕາມຄວາມຮຸນແຮງຂອງຄວາມເປັນພິການ ....................................27

3.3 ຄຸນລັກສະນະທາງດ້ານປະຊາກອນ....28
3.3.1 ອາຍຸ....28
3.3.2 ເພດ....29
3.3.3 ຊົນເຜົ່າ....29
3.3.4 ສາດສະໜາ....30
3.4 ຄຸນລັກສະນະຂອງຄົວເຮືອນ ແລະ ຊີວິດຄອບຄົວ....31
3.4.1 ຂະໜາດຂອງຄົວເຮືອນ....31
3.4.2 ສະພາບສົມລົດ (ພົນລະເມືອງອາຍຸ 15 ປີ ຂຶ້ນໄປ)....31
3.4.3 ການມີລູກ....33
3.4.4 ມາດຕະຖານ ການດຳລົງຊີວິດຂອງຄົວເຮືອນ....33
3.5 ການສຶກສາ ແລະ ການຝຶກອົບຮົມວິຊາຊີບ....34
3.5.1 ອັດຕາການຮູ້ໜັງສື (ພົນລະເມືອງອາຍຸ 6 ປີ ຂຶ້ນໄປ)....34
3.5.2 ອັດຕາການເຂົ້າໂຮງຮຽນ (ພົນລະເມືອງອາຍຸ 6 ປີ ຂຶ້ນໄປ)....36
3.5.3 ການສຳເລັດການສຶກສາ (ພົນລະເມືອງອາຍຸ 6 ປີ ຂຶ້ນໄປ)....38
3.6 ການມີສ່ວນຮ່ວມຂອງກຳລັງແຮງງານ ແລະ ການຈ້າງງານ....40
3.6.1 ກິດຈະກຳຕົ້ນຕໍ (ພົນລະເມືອງອາຍຸ 10 ປີ ຂຶ້ນໄປ)....40
3.6.2 ການມີສ່ວນຮ່ວມໃນກຳລັງແຮງງານ (ພົນລະເມືອງອາຍຸ 15 ຫາ 64 ປີ)....42
3.6.3 ພົນລະເມືອງໄວໜຸ່ມ ທີ່ບໍ່ຢູ່ໃນການຈ້າງງານ, ການສຶກສາ ແລະ ການຝຶກອົບຮົມ (ອາຍຸ 15 ຫາ 24 ປີ)....43
IV. ສະຫຼຸບ, ຄຳແນະນຳ ແລະ ການພົວພັນດ້ານນະໂຍບາຍ....45
4.1 ສາເຫດຄວາມເປັນພິການ....45
4.2 ອັດຕາການເຂົ້າໂຮງຮຽນ ແລະ ຜົນການຮຽນຕ່ຳ....47
4.3 ໂອກາດ ໃນການເຂົ້າເຖິງ ການມີວຽກເຮັດ ໃນຕະຫຼາດແຮງງານ ຍັງມີຂໍ້ຈຳກັດ....48
4.4 ຄວາມທຸກຍາກ ຂອງພົນລະເມືອງພິການ....50
4.5 ຄວາມຕ້ອງການຂໍ້ມູນ ແລະ ການປຽບທຽບຂໍ້ມູນ ພົນລະເມືອງພິການໃນ ສປປ ລາວ....51
ເອກະສານອ້າງອີງ....54
ເອກະສານຊ້ອນທ້າຍ....57

# ຄຳນຳ

ພິການລະເມືອງພິການ ແມ່ນຜູ້ທີ່ມີຄວາມຫຍຸ້ງຍາກ ໃນການເບິ່ງເຫັນ, ການໄດ້ຍິນ, ການຍ່າງ (ຫຼື ການເຄື່ອນຍ້າຍ), ການຈື່ຈຳ (ຫຼື ສະມາທິ), ການດູແລຕົນເອງ (ການອາບ/ການນຸ່ງເຄື່ອງ) ແລະ ການປາກເວົ້າ ຫຼື ການສື່ສານ. ນິຍາມດັ່ງກ່າວນີ້ ແມ່ນໄດ້ມາຈາກການນຳໃຊ້ຊຸດຄຳຖາມສັ້ນທີ່ມີ 6 ຄຳຖາມ ຕາມການກຳນົດຂອງ ກຸ່ມວໍຊິງຕັນ (Washington Group) ໃຊ້ສຳລັບ ການເກັບກຳຂໍ້ມູນໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ. ການເກັບກຳຂໍ້ມູນກ່ຽວກັບ ພົນລະເມືອງພິການ ແມ່ນເພື່ອສະໜອງຂໍ້ມູນໃຫ້ ລັດຖະບານ ສປປ ລາວ ຮັບໃຊ້ເຂົ້າໃນການວາງແຜນ ເພື່ອໃຫ້ພົນລະເມືອງພິການສາມາດເຂົ້າເຖິງດ້ານການບໍລິການ.

ການມີຂໍ້ມູນສະຖິຕິພົນລະເມືອງພິການນັ້ນຈະສາມາດຊ່ວຍໃຫ້ລັດຖະບານ ເຫັນໄດ້ເຖິງສະພາບຄວາມແຕກຕ່າງລະຫວ່າງ ພົນລະເມືອງພິການ ແລະ ພົນລະເມືອງທີ່ບໍ່ພິການ. ບໍ່ວ່າຈະເປັນພົນລະເມືອງພິການ ກໍ່ສາມາດເຂົ້າເຖິງການສຶກສາ, ສາທາລະນະສຸກ, ການດຳລົງຊີວິດ, ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ການມີສ່ວນຮ່ວມໃນສັງຄົມ ທີ່ເທົ່າທຽມກັນ.

ນອກຈາກນັ້ນແລ້ວ, ຂໍ້ມູນສະຖິຕິກ່ຽວກັບພົນລະເມືອງພິການ ຍັງຊ່ວຍໃຫ້ລັດຖະບານ ສປປ ລາວ ສາມາດແກ້ໄຂບັນຫາຂອງຄວາມຍຸດຕິທຳ ແລະ ຄວາມສະເໝີພາບ. ຂໍ້ມູນນີ້ ຍັງສະໜອງໃຫ້ແກ່ ການຄົ້ນຄວ້າວິໄຈລົງເລິກ ກ່ຽວກັບສະພາບການຂອງພົນລະເມືອງພິການ ແລະ ຫາວິທີແກ້ໄຂ ບັນຫາທ້າທາຍທີ່ພວກເຂົາປະສົບພົບພໍ້ຢູ່.

ຈຸດປະສົງຕົ້ນຕໍຂອງ ບົດລາຍງານ ກ່ຽວກັບ ພົນລະເມືອງພິການ ສະບັບນີ້ ແມ່ນເພື່ອສ້າງຄວາມຮັບຮູ້ໃນສັງຄົມ ຂອງ ສປປ ລາວ ກ່ຽວກັບ ສະພາບຂອງພົນລະເມືອງພິການ. ຂໍ້ມູນສະຖິຕິ ກ່ຽວກັບ ພົນລະເມືອງພິການ ແມ່ນມີປະໂຫຍດຫຼາຍ ສຳລັບການປ່ຽນແປງທັດສະນະຄະຕິ ຂອງຜູ້ສ້າງແຜນນະໂຍບາຍ ໃນການກຳນົດແຜນນະໂຍບາຍ ລວມທັງການພັດທະນາການບໍລິການໃຫ້ພວກເຂົາສາມາດເຂົ້າເຖິງໄດ້.

ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ໄດ້ຈັດພິມ ບົດລາຍງານ ພົນລະເມືອງພິການສະບັບນີ້ ໂດຍນຳໃຊ້ຂໍ້ມູນມາຈາກ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ 4 ປີ 2015. ຂໍ້ມູນນີ້ ຈະຊ່ວຍໃນການພັດທະນາ ພົນລະເມືອງພິການ ຢ່າງທົ່ວເຖິງ ໃນອະນາຄົດ ຢູ່ ສປປ ລາວ. ນອກຈາກນີ້ພວກເຮົາ ຍັງຈະສືບຕໍ່ປັບປຸງ ຄຸນນະພາບ ຂອງການເກັບກຳຂໍ້ມູນ ກ່ຽວກັບ ສະຖິຕິພົນລະເມືອງພິການ ເພື່ອວ່າ ພວກເຮົາຈະສາມາດສະໜອງຂໍ້ມູນໃຫ້ແກ່ການວາງແຜນນະໂຍບາຍ ໃຫ້ພົນລະເມືອງພິການ ສາມາດເຂົ້າເຖິງການບໍລິການ ທີ່ມີຄຸນນະພາບ.

ຕາງໜ້າໃຫ້ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ, ຂ້າພະເຈົ້າ ຂໍຊົມເຊີຍຢ່າງສຸດໃຈ ມາຍັງບັນດາທ່ານທຸກພາກສ່ວນທີ່ໄດ້ເຂົ້າຮ່ວມ ແລະ ໄດ້ປະກອບສ່ວນໃນການສ້າງບົດລາຍງານ ພົນລະເມືອງພິການ ສະບັບນີ້ ແລະ ໂດຍສະເພາະແມ່ນ ກະຊວງການຕ່າງປະເທດ ຂອງ ປະເທດນໍເວ ທີ່ໄດ້ໃຫ້ການຊ່ວຍເຫຼືອດ້ານງົບປະມານໃນການດຳເນີນການຄົ້ນຄວ້າວິໄຈ, ອົງການ ເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ ທີ່ໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ ທີ່ໃຫ້ການຊ່ວຍເຫຼືອທາງດ້ານງົບປະມານໃນການຈັດພິມບົດລາຍງານ ແລະ ກອງປະຊຸມເຜີຍແຜ່ຜົນການວິໄຈ.

**ຫົວໜ້າສູນສະຖິຕິແຫ່ງຊາດ**

# ຄຳສັບຫຍໍ້

| | |
|---|---|
| **ASEAN** | ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ |
| **CCM** | ສົນທິສັນຍາວ່າດ້ວຍລະເບີດລູກຫວ່ານ |
| **CDPED** | ຄະນະກຳມະການ ເພື່ອຜົນລະເມືອງພິການແລະ ຜູ້ອາຍຸສູງ ຂັ້ນເມືອງ |
| **CDPEP** | ຄະນະກຳມະການ ເພື່ອຜົນລະເມືອງພິການແລະ ຜູ້ອາຍຸສູງ ຂັ້ນແຂວງ |
| **DPO** | ອົງການຈັດຕັ້ງຂອງຜົນລະເມືອງພິການ |
| **ESCAP** | ຄະນະກຳມາທິການ ເສດຖະກິດ ແລະ ສັງຄົມ ປະຈຳພາກພື້ນອາຊີ ແລະ ປາຊີຟິກ |
| **HI** | ອົງການເພື່ອມະນຸດສະທຳ ແລະ ການມີສ່ວນຮ່ວມ (ຜ່ານມາເອີ້ນວ່າ ອົງການສາກົນເພື່ອຄົນພິການ) |
| **ICF** | ການຈັດປະເພດຂອງສາກົນ ກ່ຽວກັບ ໜ້າທີ່ການ, ຄວາມເປັນພິການ ແລະ ສຸຂະພາບ |
| **INGO** | ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ |
| **LECS** | ການສຳຫຼວດ ການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ |
| **LSB** | ສູນສະຖິຕິແຫ່ງຊາດ |
| **MoES** | ກະຊວງສຶກສາທິການ ແລະ ກິລາ |
| **MoH** | ກະຊວງສາທາລະນະສຸກ |
| **MoLSW** | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| **NCDE** | ຄະນະກຳມະການແຫ່ງຊາດ ເພື່ອຜົນລະເມືອງພິການແລະ ຜູ້ອາຍຸສູງ |
| **NRA** | ຄະນະກຳມະການຄຸ້ມຄອງລະເບີດແຫ່ງຊາດ |
| **PDR** | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ |
| **PHC** | ການສຳຫຼວດ ພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ |
| **SDG** | ເປົ້າໝາຍການພັດທະນາແບບຍືນຍົງ |
| **TVET** | ອາຊີວະສຶກສາ |
| **UNCRPD** | ສົນທິສັນຍາຂອງ ອົງການສະຫະປະຊາຊາດ ວ່າດ້ວຍ ສິດທິຂອງພົນລະເມືອງພິການ |
| **UXO** | ລະເບີດບໍ່ທັນແຕກ |
| **WG** | ກຸ່ມວໍຊິງຕັນ ກ່ຽວກັບ ສະຖິຕິພົນລະເມືອງພິການ |
| **WHO** | ອົງການອະນາໄມໂລກ |
| **WHS** | ການສຳຫຼວດສຸຂະພາບທົ່ວໂລກ |

## ສາລະບານຮູບສະແດງ

ຮູບສະແດງ 1 ການພົວພັນກັນ ຂອງແຕ່ລະພາກສ່ວນ ແລະ ອົງປະກອບຕ່າງໆ ຂອງ ICF ....15
ຮູບສະແດງ 2 ອັດຕາສ່ວນພົນລະເມືອງພິການ ໃນ ສປປ ລາວ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ) ....20
ຮູບສະແດງ 3 ການແຈກຢາຍຂອງພົນລະເມືອງພິການ ແບ່ງຕາມລະດັບຄວາມຫຍຸ້ງຍາກ....20
ຮູບສະແດງ 4 ພົນລະເມືອງທີ່ມີຄວາມຫຍຸ້ງຍາກຊໍ້າຊ້ອນ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ)....21
ຮູບສະແດງ 5 ອັດຕາສ່ວນພົນລະເມືອງພິການ ແບ່ງຕາມເພດ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ)....22
ຮູບສະແດງ 6 ອັດຕາສ່ວນພົນລະເມືອງພິການ ແບ່ງຕາມໝວດອາຍຸ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ) ....22
ຮູບສະແດງ 7 ຈໍານວນ ແລະ ອັດຕາສ່ວນພົນລະເມືອງພິການ (ຢ່າງໜ້ອຍ "ມີຄວາມຫຍຸ້ງຍາກໜ້ອຍໜຶ່ງ"), ແບ່ງຕາມແຂວງ ....25
ຮູບສະແດງ 8 ອັດຕາສ່ວນພົນລະເມືອງພິການ ແບ່ງຕາມເຂດຕົວເມືອງ/ຊົນນະບົດ ....25
ຮູບສະແດງ 9 ອັດຕາສ່ວນພົນລະເມືອງພິການ ແບ່ງຕາມກຸ່ມຊົນເຜົ່າ....26
ຮູບສະແດງ 10 ສາເຫດຕົ້ນຕໍຂອງຄວາມພິການ ແບ່ງຕາມຄວາມຮຸນແຮງຂອງຄວາມເປັນພິການ ....27
ຮູບສະແດງ 11 ອາຍຸສະເລ່ຍ ແລະ ອາຍຸກາງ ຂອງພົນລະເມືອງພິການ ແລະ ພົນລະເມືອງບໍ່ພິການ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ) 28
ຮູບສະແດງ 12 ຈໍານວນພົນລະເມືອງຮູບທາດແບ່ງຕາມອາຍຸ ຂອງພົນລະເມືອງບໍ່ພິການ ແລະ ພົນລະເມືອງພິການ....29
ຮູບສະແດງ 13 ການແຈກຢາຍຂອງພົນລະເມືອງພິການ ແລະ ພົນລະເມືອງບໍ່ພິການແບ່ງຕາມກຸ່ມພາສາປາກເວົ້າ....30
ຮູບສະແດງ 14 ການແຈກຢາຍຂອງພົນລະເມືອງພິການ ແບ່ງຕາມສາດສະໜາ ....30
ຮູບສະແດງ 15 ອັດຕາສ່ວນຂອງພົນລະເມືອງພິການ ແລະ ພົນລະເມືອງບໍ່ພິການທີ່ໄດ້ແຕ່ງງານ ແບ່ງຕາມກຸ່ມອາຍຸ ....32
ຮູບສະແດງ 16 ອັດຕາສ່ວນຂອງແມ່ຍິງທີ່ເຄີຍເກີດລູກມີຊີວິດຕາມອາຍຸ 15-49 ປີ ....33
ຮູບສະແດງ 17 ມາດຕະຖານການດໍາລົງຊີວິດຂອງຄົວເຮືອນທີ່ມີພົນລະເມືອງພິການ ແລະ ພົນລະເມືອງທີ່ບໍ່ພິການແບ່ງຕາມຕາມໜ້າທີ່ການຂອງຮ່າງກາຍ (ອີງຕາມ ດັດສະນີຄວາມຮັ່ງມີຂອງຄົວເຮືອນ ໃນ 5 ສ່ວນ)....34
ຮູບສະແດງ 18 ອັດຕາການຮູ້ໜັງສືຂອງພົນລະເມືອງພິການ ແລະ ພົນລະເມືອງບໍ່ພິການ ແບ່ງຕາມໜ້າທີ່ການຂອງຮ່າງກາຍ ....35
ຮູບສະແດງ 19 ອັດຕາຮູ້ໜັງສືຂອງແມ່ຍິງຕໍ່ຜູ້ຊາຍ ຂອງພົນລະເມືອງພິການ ແລະ ບໍ່ພິການ ....35
ຮູບສະແດງ 20 ອັດຕາການຮູ້ໜັງສື ຂອງພົນລະເມືອງພິການ ແລະ ພົນລະເມືອງບໍ່ພິການ ແບ່ງຕາມກຸ່ມອາຍຸ....36
ຮູບສະແດງ 21 ອັດຕາການເຂົ້າໂຮງຮຽນຂອງພົນລະເມືອງພິການ ແລະ ພົນລະເມືອງບໍ່ພິການ ແບ່ງຕາມການປະຕິບັດໜ້າທີ່ການຂອງຮ່າງກາຍ ....37
ຮູບສະແດງ 22 ອັດຕາການເຂົ້າໂຮງຮຽນຂອງເດັກແບ່ງຕາມກຸ່ມເກນອາຍຸ....37
ຮູບສະແດງ 23 ອັດຕາການເຂົ້າຮຽນຂອງເດັກຍິງຕໍ່ເດັກຊາຍ ທີ່ກໍາລັງຮຽນຢູ່ແບ່ງຕາມກຸ່ມອາຍຸ ....38
ຮູບສະແດງ 24 ການສຶກສາສູງສຸດຂອງພົນລະເມືອງພິການ ແລະ ພົນລະເມືອງບໍ່ພິການ ແບ່ງຕາມ ໜ້າທີ່ການຂອງຮ່າງກາຍ ....39
ຮູບສະແດງ 25 ລະດັບການສຶກສາສູງສຸດຂອງພົນລະເມືອງພິການ ແລະ ພົນລະເມືອງບໍ່ພິການ ແບ່ງຕາມກຸ່ມອາຍຸ....40
ຮູບສະແດງ 26 ການມີສ່ວນຮ່ວມໃນແຮງງານ ຂອງພົນລະເມືອງໃນເກນອາຍຸເຮັດວຽກ (ພົນລະເມືອງອາຍຸ15 ຫາ 64 ປີ)....42
ຮູບສະແດງ 27 ອັດຕາສ່ວນການມີຮ່ວມໃນກໍາລັງແຮງງານ ຕາມອາຍຸ ສໍາລັບພົນລະເມືອງພິການ ແລະ ພົນລະເມືອງບໍ່ພິການ (ພົນລະເມືອງອາຍຸ 15 ຫາ 64 ປີ) ....43
ຮູບສະແດງ 28 ການມີສ່ວນຮ່ວມໃນກໍາລັງແຮງງານ ຕາມໝວດອາຍຸ ຂອງພົນລະເມືອງພິການ ແບ່ງຕາມໜ້າທີ່ການຂອງຮ່າງກາຍ 43
ຮູບສະແດງ 29 ພົນລະເມືອງໄວໜຸ່ມ ທີ່ບໍ່ຢູ່ໃນການຈ້າງງານ, ການສຶກສາ ຫຼື ການຝຶກອົບຮົມ....44
ຮູບສະແດງ 30 ການສໍາຫຼວດໃຫຍ່ ແລະ ການສໍາຫຼວດຕົວແທນ ໄດ້ເກັບກໍາຂໍ້ມູນກ່ຽວກັບພົນລະເມືອງພິການ ໃນ ສປປ ລາວ ....52

## ສາລະບານຕາຕະລາງ

ຕາຕະລາງ 1 ຈຳນວນ ແລະ ການແຈກຢາຍຂອງພົນລະເມືອງພິການ ແບ່ງຕາມລະດັບຄວາມຫຍຸ້ງຍາກ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ) ..... 20
ຕາຕະລາງ 2 ອັດຕາສ່ວນພົນລະເມືອງພິການ ແບ່ງຕາມປະເພດໜ້າທີ່ການ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ) ..... 21
ຕາຕະລາງ 3 ອັດຕາສ່ວນພົນລະເມືອງພິການ ແບ່ງຕາມໝວດອາຍຸ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ) ..... 22
ຕາຕະລາງ 4 ຈຳນວນພົນລະເມືອງພິການ, ອັດຕາສ່ວນ ແລະ ການແຈກຢາຍຂອງພົນລະເມືອງພິການແບ່ງຕາມໝວດອາຍຸ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ) ..... 23
ຕາຕະລາງ 5 ອັດຕາສ່ວນ ແລະ ການແຈກຢາຍພົນລະເມືອງພິການ ແບ່ງຕາມແຂວງ (ພົນລະເມືອງອາຍຸ 5 ປີ ຂຶ້ນໄປ) ..... 24
ຕາຕະລາງ 6 ສາເຫດຕົ້ນຕໍຂອງການເປັນພິການ ແບ່ງຕາມເພດ (ບໍ່ລວມຜູ້ທີ່ບໍ່ຕອບ) ..... 27
ຕາຕະລາງ 7 ການແຈກຢາຍພົນລະເມືອງແບ່ງຕາມຄວາມຮຸນແຮງຂອງຄວາມເປັນພິການ ແລະ ເພດ ..... 29
ຕາຕະລາງ 8 ຂະໜາດຂອງຄົວເຮືອນທີ່ມີພົນລະເມືອງພິການ ແລະ ຄົວເຮືອນທີ່ບໍ່ມີພົນລະເມືອງພິການ ..... 31
ຕາຕະລາງ 9 ສະພາບສົມລົດຂອງພົນລະເມືອງບໍ່ພິການ ແລະ ພົນລະເມືອງພິການ ແບ່ງຕາມເພດ ..... 31
ຕາຕະລາງ 10 ສະພາບສົມລົດຂອງພົນລະເມືອງພິການແບ່ງຕາມການປະຕິບັດໜ້າທີ່ການຂອງຮ່າງກາຍ ..... 33
ຕາຕະລາງ 11 ວຽກຂອງຄົນພິການ ແລະ ຄົນບໍ່ມີຄວາມພິການ ໃນ 12 ເດືອນຜ່ານມາ (ພົນລະເມືອງອາຍຸ 10 ປີ ຂຶ້ນໄປ) ..... 41
ຕາຕະລາງ 12 ກິດຈະກຳຕົ້ນຕໍຂອງພົນລະເມືອງພິການ ໃນ 12 ເດືອນຜ່ານມາ (ພົນລະເມືອງອາຍຸ 10 ປີ ຂຶ້ນໄປ) ແບ່ງຕາມໜ້າທີ່ການຂອງຮ່າງກາຍ ..... 41

## ສະຫຼຸບຫຍໍ້

**ສະພາບລວມ.** ລັດຖະບານ ສປປ ລາວ ໄດ້ຮັບຮອງເອົາ ສົນທິສັນຍາຂອງ ອົງການສະຫະປະຊາຊາດ ວ່າດ້ວຍສິດທິຂອງພົນລະເມືອງພິການ (UNCRPD) ໃນວັນທີ 25 ກັນຍາ 2009 ເຊິ່ງກຳນົດ ກ່ຽວກັບສິດທິມະນຸດ ຂອງພົນລະເມືອງພິການໃນທຸກຂະແໜງການ. ບັນດາ ນະໂຍບາຍ, ຍຸດທະສາດ ແລະ ແຜນປະຕິບັດງານ ມີເປົ້າໝາຍເນັ້ນໃສ່ພົນລະເມືອງພິການ ເຊິ່ງເປັນກຸ່ມຄົນທີ່ດ້ອຍໂອກາດ ແມ່ນໄດ້ຖືກຮັບຮອງເອົາຢ່າງຕໍ່ເນື່ອງ ໃນໄລຍະຊຸມປີຜ່ານໆມາ ໃນ ສປປ ລາວ. ມາຮອດປີ 2015 ການສຶກສາຄົ້ນຄວ້າກ່ຽວກັບພົນລະເມືອງພິການໃນ ສປປ ລາວ ແມ່ນມີໜ້ອຍ. ຂໍ້ມູນທີ່ຊັດເຈນ ກ່ຽວກັບ ສະຖິຕິພົນລະເມືອງພິການ ແມ່ນມີຄວາມສຳຄັນຫຼາຍ ເພື່ອເປັນບ່ອນອີງໃນການສ້າງແຜນນະໂຍບາຍຂອງລັດຖະບານ ໂດຍສະເພາະແມ່ນເລັ່ງໃສ່ບັນດາຄວາມຕ້ອງການພື້ນຖານຂອງພົນລະເມືອງພິການ. ໂດຍອີງຕາມມາດຕາ 31 (ສະຖິຕິ ແລະ ການເກັບກຳຂໍ້ມູນ) ຂອງສົນທິສັນຍາ UNCRPD ເຊິ່ງຮຽກຮ້ອງໃຫ້ ບັນດາປະເທດພາຄີ ຕ້ອງໄດ້ເກັບກຳຂໍ້ມູນສະຖິຕິແຍກປະເພດ ກ່ຽວກັບ ພົນລະເມືອງພິການ ແລະ ນຳໃຊ້ຂໍ້ມູນເພື່ອຈັດຕັ້ງປະຕິບັດຂໍ້ກຳນົດຕ່າງໆ ຂອງສົນທິສັນຍາ UNCRPD ໃນຂອບເຂດການປົກຄອງຂອງພວກເຂົາ, ສະນັ້ນ ຈຶ່ງໄດ້ດຳເນີນເກັບກຳ ຂໍ້ມູນພົນລະເມືອງພິການໃນຂອບເຂດທົ່ວປະເທດ ໃນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ປີ 2015. ບົດລາຍງານ ກ່ຽວກັບ ພົນລະເມືອງພິການສະບັບນີ້ ມີເປົ້າໝາຍເພື່ອສະໜອງ ຂໍ້ມູນ ກ່ຽວກັບ ສະຖິຕິພົນລະເມືອງພິການແບ່ງຕາມປະເພດ ໃຫ້ພາກສ່ວນກ່ຽວຂ້ອງແຕ່ຂັ້ນສູນກາງຮອດຂັ້ນທ້ອງຖິ່ນ ແລະ ສະແດງຕາຕະລາງປຽບທຽບຄຸນລັກສະນະຕົ້ນຕໍ ທາງດ້ານເສດຖະກິດ-ສັງຄົມ ລະຫວ່າງພົນລະເມືອງພິການ ແລະ ພົນລະເມືອງທີ່ບໍ່ພິການ.

**ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ 4 ໃນປີ 2015**. ບົດລາຍງານສະບັບນີ້ ແມ່ນນຳໃຊ້ຂໍ້ມູນຈາກ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ 4 ເຊິ່ງໄດ້ດຳເນີນຂຶ້ນ ໃນເດືອນມີນາ ປີ 2015. ການເກັບກຳຂໍ້ມູນ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ປີ 2015 ແມ່ນເປັນຄັ້ງທຳອິດທີ່ໄດ້ນຳໃຊ້ ກຸ່ມຄຳຖາມສັ້ນກ່ຽວກັບພົນລະເມືອງພິການ ຂອງກຸ່ມວໍຊິງຕັນ ເຊິ່ງຖືກຮັບຮູ້ວ່າເປັນ ວິທີປະຕິບັດທີ່ດີໃນລະດັບສາກົນ ສຳລັບການວັດແທກຄວາມພິການໃນການສຳຫຼວດພົນລະເມືອງ ແລະ ການສຳຫຼວດແບບຕົວແທນ. ກຸ່ມຄຳຖາມສັ້ນ ຈະສອບຖາມ ຜູ້ຕອບຄຳຖາມ ກ່ຽວກັບ ຄວາມຫຍຸ້ງຍາກ ທີ່ພວກເຂົາປະສົບພົບພໍ້ຢູ່ ໃນ 6 ໜ້າທີ່ການຕົ້ນຕໍ ຄື: ການເບິ່ງເຫັນ, ການໄດ້ຍິນ, ການຍ່າງ (ຫຼື ການເຄື່ອນຍ້າຍ), ການຈື່ຈຳ (ຫຼື ສະມາທິ), ການດູແລຕົນເອງ (ການອາບ/ການນຸ່ງເຄື່ອງ) ແລະ ການປາກເວົ້າ ຫຼື ການສື່ສານ. ໃນບົດລາຍງານສະບັບນີ້ ບຸກຄົນໃດທີ່ມີຄວາມຫຍຸ້ງຍາກຢ່າງໜ້ອຍ 1 ໜ້າທີ່ການ ຖືວ່າແມ່ນພົນລະເມືອງພິການ

ຜົນໄດ້ຮັບຕົ້ນຕໍຂອງ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ໃນປີ 2015 ກ່ຽວກັບພົນລະເມືອງພິການມີດັ່ງນີ້:

**ອັດຕາສ່ວນພົນລະເມືອງພິການ**. ພົນລະເມືອງຈຳນວນ 160,881 ຄົນ (ໃນກຸ່ມພົນລະເມືອງອາຍຸ 5 ປີຂຶ້ນໄປ) ແມ່ນພົນລະເມືອງພິການ ແລະ ອັດຕາສ່ວນພົນລະເມືອງພິການລວມແມ່ນ 2.77 ສ່ວນຮ້ອຍ ໃນ ສປປ ລາວ. ອັດຕາສ່ວນສູງກວ່າໝູ່ ແມ່ນຄວາມຫຍຸ້ງຍາກໃນການເບິ່ງເຫັນ (1.35 ສ່ວນຮ້ອຍ) ແລະ ການຍ່າງ ຫຼື ການເຄື່ອນຍ້າຍ (1.30 ສ່ວນຮ້ອຍ), ຖັດມາແມ່ນ ການໄດ້ຍິນ (1.23 ສ່ວນຮ້ອຍ) ແລະ ການຈື່ຈຳ ຫຼື ສະມາທິ (1.20 ສ່ວນຮ້ອຍ), ການດູແລຕົນເອງ (1.10 ສ່ວນຮ້ອຍ) ແລະ ການປາກເວົ້າ ຫຼື ການສື່ສານ (0.95 ສ່ວນຮ້ອຍ). ມີຄວາມຫຍຸ້ງຍາກໜ້ອຍໜຶ່ງ ມີ 67.16 ສ່ວນຮ້ອຍ, ມີຄວາມຫຍຸ້ງຍາກປານກາງ 23.08 ສ່ວນຮ້ອຍ ແລະ ມີ

预览已结束，完整报告链接和二维码如下：
https://www.yunbaogao.cn/report/index/report?reportId=5_19721